ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**BANQUE POUR LE COMMERCE EXTERIEUR LAO PUBLIC**

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 069 /ທຄຕລ .2021..........

ນະຄອນຫຼວງວຽງຈັນ, ວັນທີ: 26 JUL 2021

# ໜັງສືແຈ້ງເຊີນ

ເຖິງ: ບັນດາໂຮງພິມພາກລັດ ແລະ ເອກະຊົນ ຢູ່ໃນນະຄອນຫຼວງວຽງຈັນ.

ເລື່ອງ : ເຊີນເຂົ້າຮ່ວມການປະມູນລາຄາ ຜະລິດປະຕິທິນ ປະຈຳປີ 2022.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງມາຍັງບັນດາໂຮງພິມພາກລັດ ແລະ ເອກະຊົນ ເພື່ອເຂົ້າຮ່ວມການປະມູນລາຄາປະຕິທິນ ທຄຕລ ປະຈຳປີ 2022 ຕາມລາຍລະອຽດລຸ່ມນີ້:

| ລ/ດ | ລາຍການ | ຕົວຢ່າງພາບປະກອບ | ລາຍລະອຽດ |
|---|---|---|---|
| 1 | **ປະຕິທິນແຂວນຝາ:** ຈຳນວນ **60.000** ອັນ |  | - ຂະໜາດ: 45*70 ຊມ (2 ເດືອນ/ໜ້າ).<br>- ເຈ້ຍໜາ 200 ກຼາມ.<br>- ພິມ 4 ສີ: ພິມ 1 ໜ້າ/ໃບ, ທັງໝົດ 7 ໃບ/ຊຸດ ລວມໜ້າປົກ.<br>- ໃສ່ຢ່ອງດູກງູເຫຼັກເບົາ ຂະໜາດ 40 ຊມ (ສີດຳ).<br>- ພິມດ້ວຍເຄື່ອງພິມຄຸນນະພາບສູງ.<br>- ການຫຸ້ມຫໍ່ປະຕິທິນ: ຖົງຢາງໃສ.<br>- 50 ອັນ/ແກັດ |
| 2 | **ປະຕິທິນຕັ້ງໂຕະ:** ຈຳນວນ **40.000** ອັນ |  | - ຂະໜາດ: 18*15 cm (2 ເດືອນ/ໜ້າ)<br>- ເຈ້ຍໜາ 210 ແກຼມ.<br>- ພິມ 4 ສີ: ພິມ 2 ໜ້າ/ໃບ, ທັງໝົດ 7 ໃບ/ຊຸດ ລວມໜ້າປົກ.<br>- ໃສ່ຢ່ອງດູກງູເຫຼັກເບົາເຕັມຫົວ (ສີຂາວ).<br>- ການຫຸ້ມຫໍ່ປະຕິທິນ: ຊອງເຈ້ຍສີຂາວ.<br>- 100 ອັນ/ແກັດ. |
| 3 | ໜ້າວຽກເພີ່ມເຕີມ: ຜູ້ສະໜອງຕ້ອງຮັບຜິດຊອບຄ່າອອກແບບປະຕິທິນ, ແຕ່ງໜ້ານາງແບບທັງໝົດ 6 ທ່ານ, ຊຸດເຄື່ອງນຸ່ງແນວແຟຊັ່ນ ໂດຍເນັ້ນການໂຄສະນາຜະລິດຕະພັນທີ່ແຕກຕ່າງກັນທັງ 6 ໜ້າປະຕິທິນ, ລວມທັງເອົາແບບຢ່າງປະຕິທິນໄປຜ່ານກະຊວງຖະແຫຼງຂ່າວ-ວັດທະນະທຳ.<br>• ອາດເວີກຂອງປະຕິທິນຕັ້ງໂຕະ ແລະ ແຂວນຝາ ແມ່ນຮູບພາບດຽວກັນ. | | |

**ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

❖ **<u>ເອກະສານຊອງທີ 1 (ບໍ່ປິດຊອງ):</u>**

1. ປະກອບເອກະສານໃບນາມນິຕິບຸກຄົນ ທີ່ດຳເນີນທຸລະກິດກ່ຽວກັບສິ່ງພິມ (ໂຮງພິມພາຍໃນ) ແລະ ດຳເນີນ



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

ທຸລະກິດຢ່າງໜ້ອຍ 3 ປີຂຶ້ນໄປ ແລະ ໃຫ້ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນຢ່າງໜ້ອຍ ປີ 2019 ແລະ ເອກະ ສານກ່ຽວກັບຜົນງານການຜະລິດປະຕິທິນ ຜ່ານມາ.

2. ກຳນົດລາຍລະອຽດສິນຄ້າຕາມສະເປັກຂ້າງເທິງ ພ້ອມທັງລະບຸເວລາການຈັດສົ່ງ.
3. ກຳນົດຍື່ນຊອງ ກ່ອນວັນພະຫັດ, ວັນທີ **05/08/2021 ເວລາ 11:00** ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່, ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ຕຶກ C.
4. ບໍລິສັດທີ່ສົນໃຈເຂົ້າຮ່ວມປະມູນຕ້ອງເຂົ້າມານຳສະເໜີການອອກແບບຂອງຕົນ ໃນວັນສຸກ, ທີ 06/08/2021.

❖ **<u>ເອກະສານຊອງທີ 2 (ປິດຊອງ)</u>**:

1. ໃບສະເໜີລາຄາໃຫ້ລະບຸເປັນສະກຸນເງິນກີບ, ລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມອາກອນມູນຄ່າເພີ່ມໃຫ້ຄົບຖ້ວນ.
2. ວັນສຸກ, ທີ **20/08/2021 ເວລາ 9:30** ໂມງ ແມ່ນມື້ເປີດຊອງປະມູນ, ສະນັ້ນ ບໍລິສັດ/ຮ້ານຕົວແທນຈຳໜ່າຍຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 3 ຕຶກ C.
3. ບໍລິສັດຜູ້ສະໜອງຕ້ອງກຳນົດສະເປັກ ພ້ອມທັງລະບຸເງື່ອນໄຂຕ່າງໆ ມາໃຫ້ຄົບຖ້ວນ ແລະ ໃຫ້ກົງກັບຄວາມຕ້ອງການໃນຕາຕະລາງຂ້າງເທິງນັ້ນ.
4. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 20/09/2021)** ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

**<u>ໝາຍເຫດ:</u>** ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

❖ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄ້ຳປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.

❖ **ການຊຳລະແບ່ງຈ່າຍເປັນ 02 ງວດ ລຸ່ມນີ້:**

* ງວດທີ 1: ຊຳລະ 15% ຂອງມູນຄ່າ ພາຍຫຼັງທີ່ເຊັນສັນຍາ ແລະ ຈົດທະບຽນສານເປັນທີ່ຮຽບຮ້ອຍແລ້ວ.

* ງວດທີ 2: ຊຳລະ 85% ຂອງມູນຄ່າ ພາຍຫຼັງສົ່ງເຄື່ອງຄົບຕາມຈຳນວນ ແລະ ກວດກາຄວາມຖືກຕ້ອງຈາກຄະນະກຳມະການຂອງ ທຄຕລ ພາຍໃນ 30 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

**ຄຳພຸດ ສິດທິລາດ**

ລາຍລະອຽດເພີ່ມເຕີມ:
ພະແນກການຕະຫຼາດ: 29965636, 28888152
ພະແນກຫ້ອງການການ: 021 213200 ຕໍ່ 414